ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ 0170--- /ອຄ.ກຄພ

ນະຄອນຫລວງວຽງຈັນ, ວັນທີ 25 ກຸມພາ 2019.

# ແຈ້ງການ

ເຖິງ: ສະມາຄົມນ້ຳມັນເຊື້ອໄຟ ແລະ ອາຍແກັສ, ບັນດາບໍລິສັດນ້ຳມັນເຊື້ອໄຟ.

ເລື່ອງ: ແຈ້ງປັບລາຄາຂາຍຍ່ອຍນ້ຳມັນເຊື້ອໄຟ ໃນຂອບເຂດທົ່ວປະເທດ.

- ອີງຕາມ ກົດໝາຍວ່າດ້ວຍລວມລາຄາ ເລກທີ 70/ສພຊ, ລົງວັນທີ 15/12/2015.
- ອີງຕາມ ແຈ້ງການຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ເລກທີ 1645/ຫສນຍ.ກລຂ, ລົງວັນທີ 02 ຕຸລາ 2018

ກະຊວງອຸດສາຫະກຳ ແລະ ການຄ້າ, ຂໍແຈ້ງມາຍັງສະມາຄົມນ້ຳມັນເຊື້ອໄຟ ແລະ ອາຍແກັສ, ບັນດາບໍລິສັດນ້ຳມັນເຊື້ອໄຟ ແລະ ປ້ຳຂາຍຍ່ອຍນ້ຳມັນເຊື້ອໄຟ ໃຫ້ປັບລາຄາຂາຍຍ່ອຍນ້ຳມັນເຊື້ອໄຟເຂດທາງສະບານແຂວງ, ນະຄອນຫລວງ ດັ່ງນີ້:

ຫົວໜ່ວຍ: ກີບ/ລິດ.

| ລ/ດ | ຈຸດ | ແອັດຊັງພິເສດ | ແອັດຊັງທຳມະດາ | ກາຊວນ |
|---|---|---|---|---|
| 1 | ນະຄອນຫລວງວຽງຈັນ | 9,760 | 8,730 | 8,410 |
| 2 | ແຂວງຜົ້ງສາລີ | - | 9,490 | 9,170 |
| 3 | ແຂວງຫລວງນ້ຳທາ | - | 9,090 | 8,770 |
| 4 | ແຂວງອຸດົມໄຊ | 10,240 | 9,210 | 8,890 |
| 5 | ແຂວງບໍ່ແກ້ວ | 9,860 | 8,830 | 8,510 |
| 6 | ແຂວງຫລວງພະບາງ | 10,160 | 9,130 | 8,810 |
| 7 | ແຂວງໄຊຍະບູລີ | 10,010 | 8,980 | 8,660 |
| 8 | ແຂວງຫົວພັນ | - | 9,130 | 8,810 |
| 9 | ແຂວງຊຽງຂວາງ | - | 8,920 | 8,600 |
| 10 | ແຂວງວຽງຈັນ | 9,760 | 8,730 | 8,410 |
| 11 | ແຂວງບໍລິຄຳໄຊ | 9,840 | 8,810 | 8,490 |
| 12 | ແຂວງຄຳມ່ວນ | 9,790 | 8,760 | 8,440 |
| 13 | ແຂວງສະຫວັນນະເຂດ | 9,790 | 8,760 | 8,440 |
| 14 | ແຂວງສາລະວັນ | - | 8,940 | 8,620 |
| 15 | ແຂວງຈຳປາສັກ | 9,820 | 8,790 | 8,470 |
| 16 | ແຂວງເຊກອງ | - | 8,970 | 8,650 |
| 17 | ແຂວງອັດຕະປື | 10,000 | 8,970 | 8,650 |
| 18 | ແຂວງໄຊສົມບູນ | - | 8,970 | 8,650 |

- ລາຄາໃໝ່ນີ້ ໃຫ້ເລີ່ມປະຕິບັດ ວັນທີ 26 ກຸມພາ 2019 ເວລາ 06 : 00 ໂມງ ໃນຂອບເຂດທົ່ວປະເທດ.

- ການປັບລາຄາຄັ້ງນີ້ ແມ່ນໄດ້ປັບຂຶ້ນລາຄານ້ຳມັນແອັດຊັງພິເສດ 240 ກີບ/ລິດ, ນ້ຳມັນແອັດຊັງທຳມະດາ 220 ກີບ/ລິດ ແລະ ນ້ຳມັນກາຊວນ 240 ກີບ/ລິດ; ຫຼຸດຖັງແຮນ້ຳມັນແອັດຊັງພິເສດ ລົງ 100 ກີບ/ລິດ, ຫຼຸດຖັງແຮນ້ຳມັນແອັດຊັງທຳມະດາ ລົງ 100 ກີບ/ລິດ, ຫຼຸດຖັງແຮນ້ຳມັນກາຊວນ ລົງ 50 ກີບ/ລິດ.

- ໃຫ້ບັນດາບໍລິສັດນ້ຳມັນເຊື້ອໄຟ ປະຕິບັດຕາມເນື້ອໃນ ຂ້າງເທິງນີ້ ຢ່າງເຂັ້ມງວດ ແລະ ຄຸ້ມຄອງປ້ຳຂາຍຍ່ອຍຂອງຕົນໃຫ້ບໍລິການຢ່າງເປັນປົກກະຕິ.

- ການຄິດໄລ່ເສຍພັນທະ ແລະ ຄ່າທຳນຽມຕ່າງໆ ແມ່ນໃຫ້ພາກສ່ວນກ່ຽວຂ້ອງຄິດໄລ່ເກັບຕາມທີ່ໄດ້ກຳນົດໄວ້ໃນໂຄງສ້າງລາຄານ້ຳມັນເຊື້ອໄຟ ສະບັບເລກທີ 0252/ກຄພນ.ຄສລ, ລົງວັນທີ 25 ກຸມພາ 2019 ຈົນກວ່າຈະມີການປ່ຽນແປງ.

- ແຈ້ງການສະບັບນີ້ ປ່ຽນແທນແຈ້ງການ ສະບັບເລກທີ 0126/ອຄ.ກຄພນ, ລົງວັນທີ 11 ກຸມພາ 2019.

ລັດຖະມົນຕີ

ລັດຖະມົນຕີ

ນ. ເຂັມມະນີ ພົນເສນາ

**ບ່ອນສົ່ງ**

- ຫ້ອງວ່າການສູນກາງພັກ (ໃຊ້ການລາຍງານ).
- ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ (ໃຊ້ການລາຍງານ).
- ຫ້ອງການ ກະຊວງການເງິນ (ເພື່ອຊາບ).
- ທ່ານຜູ້ວ່າການທະນາຄານແຫ່ງ ສປປ ລາວ (ເພື່ອຊາບ).
- ກົມພາສີ ແລະ ກົມສ່ວຍສາອາກອນ ກະຊວງການເງິນ (ເພື່ອຊາບ ແລະ ໃຫ້ຄວາມຮ່ວມມື).
- ກົມຂົນສົ່ງ, ກະຊວງ ໂຍທາທິການ ແລະ ຂົນສົ່ງ (ເພື່ອຊາບ).
- ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ ທົ່ວປະເທດ (ເພື່ອຊາບ ແລະ ຕິດຕາມ).